ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ 2551 /ຫກງ
ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2021

# ແຈ້ງການ

ຮຽນ:- ທ່ານ ຫົວໜ້າຫ້ອງການ, ກົມແຜນການ-ການເງິນ, ກົມການເງິນ ທີ່ຂຶ້ນກັບບັນດາກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ
- ທ່ານ ຫົວໜ້າ ພະແນກການເງິນ, ພະແນກການ ອ້ອມຂ້າງແຂວງ, ນະຄອນຫຼວງ, ຂະແໜງງົບປະມານທ້ອງຖິ່ນ ໃນຂອບເຂດທົ່ວປະເທດ

ເລື່ອງ: ການປິດຮັບເອກະສານລາຍຈ່າຍງົບປະມານແຫ່ງລັດ, ການສະຫຼຸບງົບປະມານ-ບັນຊີ ແລະ ການສົ່ງບົດສະຫຼຸບລາຍງານການເງິນ ປະຈໍາປີ 2021

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019;
- ອີງຕາມ ຄໍາແນະນໍາ ວ່າດ້ວຍ ການປິດສະຫຼຸບງົບປະມານ-ບັນຊີ ແລະ ການສະຫຼຸບຂາດຕົວງົບປະມານ ສະບັບເລກທີ 4168/ກງ, ລົງວັນທີ 28 ພະຈິກ 2017;
- ອີງຕາມ ໃບສະເໜີຂອງຄັງເງິນແຫ່ງຊາດ ສະບັບເລກທີ 5226 /ຄງຊ, ລົງວັນທີ 25 ທັນວາ 2021

ເພື່ອແນະນໍາ ຂັ້ນຕອນ ແລະ ວິທີການ ຈັດຕັ້ງປະຕິບັດງົບປະມານແຫ່ງລັດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ສາມາດປິດສະຫຼຸບງົບປະມານ ສູນໂມງ ແລະ ຂາດຕົວ ປີ 2021 ຕາມແບບຟອມຂອງກະຊວງການເງິນ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ທັນກໍານົດເວລາ ຕາມລະບຽບການ ກໍານົດ.

## ຫົວໜ້າຫ້ອງການກະຊວງການເງິນ ອອກແຈ້ງການແນະນໍາ ດັ່ງນີ້:

### 1. ການປິດຮັບເອກະສານລາຍຈ່າຍງົບປະມານ

- ຫົວໜ່ວຍງົບປະມານ ຂັ້ນ ສູນກາງ/ທ້ອງຖິ່ນ ສົ່ງຂໍ້ມູນ ໃບຖອນເງິນ, ໃບຄໍາສັ່ງຈ່າຍເງິນ ງົບປະມານ ປີ 2021 ໃຫ້ຄັງເງິນແຫ່ງຊາດ/ຄັງເງິນປະຈໍາທ້ອງຖິ່ນ ຜ່ານລະບົບຂໍ້ມູນຂ່າວສານການເງິນພາກລັດ (GFIS) ບໍ່ໃຫ້ກາຍ ວັນທີ 16 ທັນວາ 2021;
- ຄັງເງິນແຫ່ງຊາດ ແລະ ຄັງເງິນປະຈໍາທ້ອງຖິ່ນ ປິດຮັບເອກະສານ ສະເໜີເບີກຈ່າຍງົບປະມານແຫ່ງລັດ ຂອງຜູ້ມີສິດສັ່ງຈ່າຍ ( ໃບຖອນເງິນ, ໃບຄໍາສັ່ງຈ່າຍເງິນ ) ຊ້າສຸດບໍ່ໃຫ້ກາຍເວລາ 16:00 ໂມງ ຂອງວັນທີ 20 ທັນວາ 2021 ແລະ ສືບຕໍ່ກວດຜ່ານເອກະສານລາຍຈ່າຍງົບປະມານແຫ່ງລັດ ໃຫ້ສໍາເລັດ ກ່ອນວັນທີ 28 ທັນວາ 2021;
- ເອກະສານລາຍຈ່າຍງົບປະມານແຫ່ງລັດ ( ໃບຖອນເງິນ, ໃບຄໍາສັ່ງຈ່າຍເງິນ ) ປີ 2021 ທີ່ຄັງເງິນແຫ່ງຊາດ ແລະ ຄັງເງິນປະຈໍາທ້ອງຖິ່ນ ໄດ້ຮັບ ແລະ ກວດຜ່ານ ແຕ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ກໍານົດ, ຊຶ່ງໄດ້ສົ່ງໃຫ້ຫົວໜ່ວຍງົບປະມານ ແລະ ພາກສ່ວນກ່ຽວຂ້ອງ ນໍາໄປປັບປຸງ, ກວດແກ້ຄືນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຕ້ອງສົ່ງຄືນໃຫ້ຄັງເງິນແຫ່ງຊາດ ແລະ ຄັງເງິນປະຈໍາທ້ອງຖິ່ນ ຊ້າສຸດບໍ່ໃຫ້ກາຍ ເວລາ 16:00 ໂມງ ຂອງວັນທີ 30 ທັນວາ 2021.

### 2. ການສະຫຼຸບງົບປະມານ-ບັນຊີ

- ຫົວໜ່ວຍງົບປະມານ ຂັ້ນ ສູນກາງ/ທ້ອງຖິ່ນ ຕ້ອງກວດກາຍອດເຫຼືອ ເງິນສົດ ແລະ ວັດຖຸມີຄ່າ ໃນຄັງ ຫຼື ສາງ, ເງິນຝາກທະນາຄານ, ໜີ້ຕ້ອງຮັບ, ໜີ້ຕ້ອງສົ່ງ, ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານແຫ່ງລັດ ແລະ ລາຍຮັບ-ລາຍຈ່າຍ ຄ່າບໍລິການ

ດ້ານວິຊາການ ທີ່ເກີດຂຶ້ນແຕ່ວັນທີ 01 ມັງກອນ ຫາ 31 ທັນວາ 2021 ໂດຍແຍກລະອຽດ ເປັນພາກ, ພາກສ່ວນ, ບັນທຶກຂໍ້ມູນເຂົ້າ ( ຕາຕະລາງ 1-5 ) ຕາມແບບຟອມທີ່ຂະແໜງການເງິນ ສົ່ງໃຫ້;

- ຫົວໜ່ວຍງົບປະມານ ຂັ້ນ ສູນກາງ/ທ້ອງຖິ່ນ ທີ່ມີການຢືມເງິນລ່ວງໜ້າໃນລະບົບຄັງເງິນ ຕ້ອງຮີບຮ້ອນເປັນເຈົ້າການ ປະກອບເອກະສານ ຫຼື ທົດແທນຄືນ ການຢືມລ່ວງໜ້າໃນລະບົບຄັງເງິນ ໃຫ້ສຳເລັດ ກ່ອນວັນທີ 28 ທັນວາ 2021;
- ພາຍຫຼັງສຳເລັດ ການປິດສະຫຼຸບງົບປະມານ ( ກວດກາສູນໂມງ ), ບັນດາຍອດເຫຼືອບັນຊີເງິນຝາກບ້ວງງົບປະມານ ຂອງຫົວໜ່ວຍງົບປະມານ ( ບັນຊີ 47 10 10 00 ) ແມ່ນໃຫ້ສືບຕໍ່ເບີກຈ່າຍໃຫ້ສຳເລັດ ບໍ່ໃຫ້ກາຍວັນທີ 31 ມີນາ 2022, ຖ້າວ່າບັນຊີດັ່ງກ່າວຍັງມີຍອດເຫຼືອ ໃຫ້ຫົວໜ່ວຍງົບປະມານ ຂັ້ນ ສູນກາງ/ທ້ອງຖິ່ນ ໄລ່ລ່ຽງ ກັບ ຄັງເງິນແຫ່ງຊາດ/ຄັງເງິນປະຈຳທ້ອງຖິ່ນ; ພາຍຫຼັງໄລ່ລ່ຽງສຳເລັດ ໃຫ້ປະສານສົມທົບ ກັບ ຂະແໜງລາຍຮັບ ອອກໃບແຈ້ງມອບ ເຂົ້າເປັນລາຍຮັບງົບປະມານໃນປີ 2022;
- ຫົວໜ່ວຍງົບປະມານ ຂັ້ນ ສູນກາງ/ທ້ອງຖິ່ນ ທີ່ມີລາຍຮັບ-ລາຍຈ່າຍ ຄ່າບໍລິການດ້ານວິຊາການ ໃຫ້ປະຕິບັດຕາມ ຄຳແນະນຳກ່ຽວກັບການຄຸ້ມຄອງລາຍຮັບ-ລາຍຈ່າຍ ຄ່າບໍລິການທາງດ້ານວິຊາການ ແລະ ກອງທຶນຂອງລັດ ສະບັບເລກທີ 0016/ກງ, ລົງວັນທີ 03 ມັງກອນ 2019 ຢ່າງເຂັ້ມງວດ.

**3. ການສ້າງ ແລະ ສົ່ງບົດສະຫຼຸບລາຍງານການເງິນ**

**3.1. ການ ສ້າງ ແລະ ສົ່ງບົດສະຫຼຸບລາຍງານການເງິນ ( ສູນໂມງ )**

- ຫົວໜ່ວຍງົບປະມານ ຂັ້ນສອງ ສ້າງ ແລະ ສົ່ງ ບົດສະຫຼຸບລາຍງານການເງິນຂອງຕົນ, ພ້ອມສັງລວມຂໍ້ມູນເຂົ້າໃນຕາຕະລາງບົດສະຫຼຸບງົບປະມານ-ບັນຊີ ສົ່ງໃຫ້ຫົວໜ່ວຍງົບປະມານ ຂັ້ນໜຶ່ງ ໃຫ້ສຳເລັດ ກ່ອນວັນທີ 10 ມັງກອນ 2022;
- ຫົວໜ່ວຍງົບປະມານ ຂັ້ນໜຶ່ງ ສ້າງ ເອກະສານລາຍງານການເງິນຂອງຕົນ ພ້ອມສັງລວມເອກະສານລາຍງານ ຂອງຫົວໜ່ວຍງົບປະມານ ຂັ້ນສອງ ທີ່ຂຶ້ນກັບຕົນ, ສັງລວມຂໍ້ມູນເຂົ້າຕາຕະລາງການສະຫຼຸບງົບປະມານ-ບັນຊີ ສົ່ງໃຫ້ຂະແໜງການເງິນ ( ຄະນະຮັບຜິດຊອບສັງລວມຕົວເລກ ) ໃຫ້ສຳເລັດ ກ່ອນວັນທີ 20 ມັງກອນ 2022.

**3.2. ການສ້າງ ແລະ ສົ່ງ ບົດສະຫຼຸບລາຍງານການເງິນ ( ຂາດຕົວ )**

- ຫົວໜ່ວຍງົບປະມານ ຂັ້ນສອງ ສ້າງ ແລະ ສົ່ງ ບົດສະຫຼຸບລານງາຍການເງິນຂອງຕົນ ສົ່ງໃຫ້ຫົວໜ່ວຍງົບປະມານ ຂັ້ນໜຶ່ງ ເພື່ອສັງລວມຕົວເລກຂອງຕົນ ໃຫ້ສຳເລັດ ກ່ອນວັນທີ 28 ກຸມພາ 2022;
- ຫົວໜ່ວຍງົບປະມານ ຂັ້ນໜຶ່ງ ສ້າງໃຫ້ສຳເລັດ ແລະ ສົ່ງ ບົດສະຫຼຸບລານງາຍການເງິນຂອງຕົນ ສົ່ງໃຫ້ຂະແໜງການເງິນ ( ຄະນະຮັບຜິດຊອບສັງລວມຕົວເລກ ) ໃຫ້ສຳເລັດ ກ່ອນວັນທີ 01 ເມສາ 2022.

**4. ການກະກຽມຍົກຍອດບັນຊີ**

ຫົວໜ່ວຍງົບປະມານ ແລະ ກອງທຶນຂອງລັດ ຂັ້ນສູນກາງ/ທ້ອງຖິ່ນ ທີ່ຈັດຕັ້ງປະຕິບັດ ວຽກງານການບັນຊີ ຕາມຫຼັກການບັນຊີຄູ່ ຕາມກົດໝາຍວ່າດ້ວຍການບັນຊີ ກຳນົດ ຕ້ອງກວດກາ ແລະ ສະສາງ ບັນດາບັນຊີທີ່ມີຍອດເຫຼືອຍົກໄປຕາມຫຼັກການບັນຊີ ( ບັນຊີ ປະເພດ 1 ຫາ 5 ) ແລະ ບັນຊີທີ່ບໍ່ມີຍົກຍອດໄປເຄື່ອນໄຫວໃນປີງົບປະມານຕໍ່ໄປ ( ບັນຊີ 8x xx xx xx ແລະ 6x xx xx xx ) ໂດຍປະຕິບັດຕາມປຶ້ມຄູ່ມືການບັນຊີ ຂອງອົງການຈັດຕັ້ງລັດ ໄດ້ກຳນົດ.

5. ມອບໃຫ້ ຫົວໜ້າຫ້ອງການ, ກົມແຜນການ-ການເງິນ, ກົມການເງິນ ຂອງບັນດາກະຊວງ, ອົງການທຽບເທົ່າ ອ້ອມຂ້າງສູນກາງ ແລະ ຫົວໜ້າ ພະແນກການເງິນ, ພະແນກການ ອ້ອມຂ້າງແຂວງ, ນະຄອນຫຼວງ, ຂະແໜງງົບປະມານ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ປະຕິບັດຕາມ ແຈ້ງການແນະນຳ ສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ມີປະສິດທິຜົນ.

( ມີເອກະສານຄັດຕິດມານຳ QR Code )

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງທ່ານຊາບ ເພື່ອຈັດຕັ້ງປະຕິບັດ ໃຫ້ສຳເລັດຕາມລະດັບຄາດໝາຍ.

**ຫົວໜ້າຫ້ອງການ**

ສົມບູນ ອິນທະປັດຖາ